# ນິທານ

# ຊຽງໝ້ຽງ

# ສາລະບານ


໑; ພຍາຂໍທ້າວຄຳມາເປັນລູກ

໒, ທ້າວຄຳແລ່ນນຳຕີນມ້າ

໓, ຈົວຄຳກິນຂີ້ອ້ອຍ

໔, ພນັນກິນໝັ້ນຮຽງພໍ່ຄ້າຈົນໄດ້ຊື່ວ່າຊຽງໝັ້ນຮຽງ

໕, ຊຽງໝັ້ນຮຽງເລືອກເມັຽ

໖, ຢາກິນເຂົ້າເຊບຂອງຊຽງໝັ້ນຮຽງ

໗, ຊຽງໝັ້ນຮຽງຕີຊ້າງພຍາ

໘, ໄປໃຫ້ນຳຣາຊຄຣູ

໙, ຕົວະພຍາກິນຂີ້ແຮ້ງ

໑໐, ຊຽງໝັ້ນຮຽງຕີສາວສນົມ

໑໑, ເກນຄົນປາກແວ່ງມາຄ້ຳຊານ

໑໒, ໄຂ່ເສັງກັນ

໑໓, ພຍາໃຫ້ຫາສິ້ນແຕ້ມ

໑໔, ຊຽງໝັ້ນຮຽງດູລາຍກົ້ນຍາພໍ່

໑໕, ເອົາຫົວລ້ານຊິນກັນ

໑໖, ຕົວະຊຽງຍານດົມຕົດ

໑໗, ຊຽງໝັ້ຽງທວາຍວ່າພຍາຈະຕາຍພາຍໃນເຈັດວັນ

໑໘, ຄຳພີລັງໂຈ ດແກ້ປັນຫາ

໑໙, ຊຽງໝັ້ຽງໄປເລວເສິກ

໒໐, ພຍາບອກຊຽງໝັ້ຽງມາກ່ອນໄກ່

໒໑, ຊຽງໝັ້ຽງໄປເກັບໝາກເຜັດ

໒໒, ຊຽງໝັ້ຽງຕົວະພຍາລົງໜອງ

໒໓, ຊຽງໝັ້ຽງປັນແມ່ພຍາ

໒໔, ພຍາບໍ່ຢາກເຫັນໜ້າຊຽງໝັ້ຽງ

໒໕, ຊຽງໝັ້ຽງເອົາຄວາຍໄປຊິນຄວາຍພຍາ

໒໖, ຊຽງໝັ້ຽງຂີ່ເຮືອນັ່ງພາຍ

໒໗, ພຍາບອກໃຫ້ໄປເຜົ້າໝົດຄອບຄົວ

໒໘, ເສັງແຕ້ມຮູບ

໒໙, ຊຽງໝັ້ຽງກິນງ້ວນພຍາ

# ໑. ພຍາຂໍທ້າວຄຳມາເປັນລູກ

ຍັງມີເມືອງແຫ່ງນຶ່ງ ຊື່ວ່າ ທະວາລາວະດີ ເມືອງນີ້ຕັ້ງຢູ່ແຄມແມ່ນ້ຳ ເປັນເມືອງທີ່ມີຄວາມອຸດົມສົມບູນໄປດ້ວຍຂອງເງິນຄຳພືດພັນທັນຍາຫານ, ຈເຣີນຮຸ່ງເຮືອງໄປດ້ວຍຂນົບທັມນຽມ ຮີດຄອງປະເພນີມີວັດວາອາຮາມທີ່ສວຍງາມ ພວກພໍ່ຄ້າສະເພົາ ຈາກຕ່າງເມືອງນຳເອົາສິນຄ້າເຂົ້າມາບໍ່ຂາດ; ເມືອງນີ້ອ້ອມຮອບໄປດ້ວຍກຳແພງ ມີປະຕູເມືອງ ມີຫໍຣົບ ເພື່ອປ້ອງກັນຕົວເມືອງເປັນຢ່າງດີ.

ພຍາຜູ່ປົກຄອງເມືອງ ກໍເປັນຜູ່ຕັ້ງໝັ້ນຢູ່ໃນສິນກິນໃນທັມ ບໍ່ມີການອິດສາບັງບຽດ ແຕ່ລະມື້ລະຍາມ ພວກສມົນກົມມະວັງ ກໍຄອຍເຝົ້າ ບົວລະບັດຮັກສາພຣະອົງ ບໍ່ໃຫ້ມີຄວາມເດືອດຮ້ອນ ເຄືອງໃຈແນວໃດ, ພຍາເອງກໍບໍ່ເຄີຍຢ້ານກົວວ່າບ້ານອື່ນເມືອງໄກຈະເຂົ້າມາຮາວີ ຂົ່ມເຫັງ ຫລືກໍ່ກວນວຸ້ນວາຍ, ຍຸຖ່າງປົກຄອງໄພ່ຟ້າຂ້າແຜ່ນດິນດ້ວຍຄວາມຜາສຸກຮົ່ມເຢັນ ຍຸຖ່າງກິນຖ່າງທານຮັກສາສິນພາວະນາ.

ຫລາຍປີຜ່ານໄປ ເມັຽຜູ່ກົກກໍລອດຖືພາມານ, ນັບເວລາໄດ້ສິບເອັດເດືອນ ກໍຈຶ່ງເກີດລູກເປັນຜູ່ຊາຍ ມີຮູບໂສມອັນສວຍງາມ, ຜູ່ເປັນພໍ່ເປັນແມ່ ຈຶ່ງຕັ້ງຊື່ສຽງຮຽງນາມ ຕາມຮີດຕາມຄອງ; ຕໍ່ມາພຍາຜູ່ເປັນພໍ່ຈຶ່ງສັ່ງໃຫ້ໂຫນ ຂຶ້ນເຝົ້າ ແລ້ວຕັດສັ່ງໃຫ້ລົງເລກເບິ່ງດວງຊາຕາຂອງ ກຸມມານ ວ່າຈະດີຫລືຮ້າຍ ໃນພາຍຄັ້ງໜ້າ.

ຝ່າຍໜໍ  ໂໝ  ເມື່ອໄດ້ລົງເລກຕັ້ງແລ້ວ
ກໍຂາບທູນໃຫ້ພຍາ ຮູ້ວ່າ ຖ້າຈະທວາຍຕາມຊາຕາຣາສີນີ້ ຕໍ່ໄປທ້າວຈະເປັນຜູ່
ມີຄວາມສຸກ ສະບາຍຫາຍກັງວົນ ແຕ່ວ່າຢາມຍັງນ້ອຍແມ່ນເປັນຄົນລ້ຽງຢາກທີ່ສຸດ ,

ທາງທີ່ດີແລ້ວ ພຣະອົງຄວນຊອກຫາເອົາເດັກຊາຍ
ຜູ່ອື່ນທີ່ເກີດຮ່ວມມື້ຮ່ວມຍາມກັບທ້າວນີ້ມາລ້ຽງຄູ່ກັນ, ເພາະຕາມເລກດວງຊາຕານີ້
ເມື່ອທ້າວນີ້ໄດ້ອາຍຸ ໑໔ ປີ ລາວຈະໄດ້ສືບບ້ານແທນເມືອງ.

ພຍາຜູ່ເປັນພໍ່ໄດ້ຟັງຄຳທມາຍທາຍທັກ
ຂອງໜໍ  ໂໝ  ຄືແນວນີ້ ຈິ່ງໃຫ້ເສນາອາໝາດຕີຄ້ອງຮ້ອງປ່າວ
ໄປຕາມຄຸ້ມແຂວງຕ່າງ ໆ , ປະກາດໃຫ້ຊາວເມືອງຮູ້ວ່າ ຖ້າຜູ່ໃດເກີດລູກຮວມມື້
ຮ່ວມຍາມກັບທ້າວ , ພຣະອົງຈະເອົາມາລ້ຽງຄູ່ກັນ;
ໃນທີ່ສຸດຈິ່ງໄດ້ລູກຂອງຊາວເມືອງຜູ່ນຶ່ງ ເຊິ່ງເກີດຮ່ວມມື້ຮ່ວມຍາມດຽວກັນ,
ເມື່ອພຍາໄດ້ລູກນ້ອຍ ມາລ້ຽງຄູ່ກັນ ພຣະອົງກໍມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້
ແຕ່ປາກົດວ່າ ຍັງຂາດແມ່ນົມທີ່ຈະລ້ຽງດູ ບັງເອີນມີຄອບຄົວຂອງເສນາຂັ້ນຕ່ຳ
ເມັຽລາວເກີດລູກອອກມາຕາຍ, ພຍາຈິ່ງສັ່ງໃຫ້ຜົວເມັຽຄູ່ນັ້ນເອົາທ້າວໄປລ້ຽງດູ
ທ້າວຜູ່ນີ້ ກໍຄືທ້າວຄຳ ຜູ່ມີເມັຽຜຍາ ປັນຍາເລີດນັ້ນແລ .!!!!